ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ເມືອງໄຊເສດຖາ ເຊື່ອມຊຶມດຳລັດປົກປ້ອງເງິນຝາກ






ກອງປະຊຸມເຜີຍແຜ່ ດຳລັດວ່າດ້ວຍການປົກປ້ອງເງິນຝາກ ໃຫ້ແກ່ບັນດາອົງການຈັດຕັ້ງພັກ-ລັດ ແລະ ບັນດາບ້ານອ້ອມຂ້າງເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ຊຶ່ງໄດ້ຈັດຂຶ້ນໃນຕອນແລງຂອງວັນທີ 22 ກັນຍາ 2020 ທີ່ສະໂມສອນ ເມືອງດັ່ງກ່າວ ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ຄຳສະຫວັນ ໂຄດໄຊ ກຳມະການປະຈຳພັກ-ຮອງເຈົ້າເມືອງໄຊເສດຖາ ແລະ ທ່ານ ນາງ ແສງດາວວິວົງຄຳຊາວ ກຳມະການພັກທະນາຄານແຫ່ງ ສປປ ລາວ (ທຫລ) , ຫົວໜ້າສຳນັກງານປົກປ້ອງເງິນຝາກ (ສປງ) ແລະ ພ້ອມນີ້ ກໍ່ມີຄະນະພັກຂັ້ນຕ່າງໆ-ຄະນະນຳຂອງເມືອງ, ບັນດາຂະແໜງການ-ໜ່ວຍງານ, ບັນດາບ້ານອ້ອມຂ້າງເມືອງໄຊເສດຖາ ພ້ອມດ້ວຍວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ ແລະ ການເຜີຍແຜ່ດຳລັດດັ່ງກ່າວ ຍັງເປັນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກ ທຫລ ແລະ ວັນສ້າງຕັ້ງ ສປງ ຄົບຮອບ 21 ປີ (23 ກັນຍາ 1999-23 ກັນຍາ 2020).

ກອງປະຊຸມເຜີຍແຜ່ໃນຄັ້ງນີ້, ທ່ານ ນາງ ດາວມະນີວອນ ວິໄລວົງ ຮອງຫົວໜ້າ ສປງໄດ້ຍົກໃຫ້ເຫັນຄວາມເປັນມາຂອງ ສປງ (ກອງທຶນປົກປ້ອງຜູ້ຝາກເງິນໃນເມື່ອກ່ອນ) ຮັບການສ້າງຕັ້ງຂຶ້ນໃນວັນທີ 23 ກັນຍາ 1999 ເປັນການຈັດຕັ້ງການເງິນຂອງລັດ, ມີຖານະທຽບເທົ່າກົມ, ເປັນນິຕິບຸກຄົນທີ່ເຄື່ອນໄຫວໂດຍບໍ່ສະແຫວງຫາຜົນກຳໄລ, ມີຄວາມເປັນເອກະລາດທາງດ້ານການເງິນ ແລະ ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ຊຶ່ງມີພາລະບົດບາດເປັນເສນາທິການໃຫ້ແກ່ສະພາບໍລິຫານ ສປງ ແລະ ທະນາຄານແຫ່ງ ສປປ ລາວ ໃນການປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງຜູ້ຝາກເງິນ ເປັນສ່ວນໜຶ່ງທີ່ມີຄວາມສຳຄັນໃນຕາໜ່າງຄວາມປອດໄພຂອງຂະແໜງການເງິນ ແລະ ວຽກງານສຳຄັນອື່ນໆ ທີ່ຕິດພັນກັບຂະແໜງການທະນາຄານ ແລະ ສະຖາບັນການເງິນຢູ່ ສປປ ລາວ.

ພ້ອມນັ້ນ, ຍັງນຳສະເໜີຄວາມຈຳເປັນຂອງການສ້າງດຳລັດ ວ່າດ້ວຍການປົກປ້ອງເງິນຝາກ ຊຶ່ງເປັນການຍົກບົດບາດທາງດ້ານການຈັດຕັ້ງຂອງ ສປງ ໃຫ້ມີຄວາມໜັກແໜ້ນ ເຂັ້ມແຂງ; ສ້າງຄວາມເຊື່ອໝັ້ນໃຫ້ແກ່ສັງຄົມ ຕໍ່ລະບົບສະຖາບັນການເງິນ ແລະ ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບຂອງລະບົບສະຖາບັນການເງິນຢູ່ ສປປ ລາວ ແລະ ນອກນີ້ ຍັງຍົກໃຫ້ເຫັນກົດລະບຽບວ່າດ້ວຍກອງທຶນປົກປ້ອງຜູ້ຝາກເງິນໃນເມື່ອກ່ອນໃນສະບັບເລກທີ 283/ທຫລ, ລົງວັນທີ 30 ສິງຫາ 1999 ທີ່ມີບາງມາດຕາ ຍັງມີຂໍ້ຈຳກັດ ແລະ ບໍ່ສອດຄ່ອງກັບນິຕິກຳອື່ນໆ ທີ່ກ່ຽວຂອງທັງພາຍໃນ ແລະ ສາກົນ. ນອກນີ້ ຍັງນຳສະເໜີພາບລວມຂອງດຳລັດວ່າດ້ວຍການປົກປ້ອງເງິນຝາກ ແລະ ເນື້ອໃນບາງມາດຕາທີ່ສຳຄັນຈຳນວນໜຶ່ງ.

ທ່ານ ນາງ ແສງດາວວີ ວົງຄຳຊາວ ກຳມະການພັກທະນາຄານແຫ່ງ ສປປ ລາວ, ຫົວໜ້າ ສປງ ໄດ້ຕີລາຄາສູງຕໍ່ໝາກຜົນສຳເລັດໃນການເຊື່ອມຊຶມດຳລັດໃນຄັ້ງນີ້ ແລະ ກໍ່ເປັນຄັ້ງທຳອິດທີ່ດຳລັດວ່າດ້ວຍການປົກປ້ອງເງິນຝາກໄດ້ນຳມາຈັດຕັ້ງເຜີຍແຜ່ໃຫ້ອຳນາດການປົກຄອງທ້ອງຖິ່ນ ຮັບຊາບ ເຂົ້າໃຈ ແລະ ນຳໄປຈັດຕັ້ງການເຜີຍແຜ່ໃຫ້ປະຊາຊົນບັນດາເຜົ່າຢູ່ບ້ານຂອງຕົນ ແລະ ຜ່ານການເຜີຍແຜ່ດຳລັດສະບັບນີ້ແລ້ວ ເຊື່ອໝັ້ນວ່າ: ຈະເປັນການເພີ່ມຄວາມຮັບຮູ້ ແລະ ເຂົ້າໃຈຈະແຈ້ງ ຕໍ່ກັບວຽກງານການປົກປ້ອງເງິນຝາກ, ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຝາກເງິນ ທັງປະກອບສ່ວນສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ຝາກເງິນ ຕໍ່ລະບົບສະຖາບັນການເງິນຢູ່ ສປປ ລາວ ນັບມື້ສູງຂຶ້ນ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ